# ຄາວຕີ້ຊາຄຣາເມັນໂຕ
# ການລົງທະບຽນເພື່ອເລືອກຕັ້ງ ແລະການເລືອກຕັ້ງ

# ແຜນການຈັດການບໍລິຫານການເລືອກຕັ້ງ
# ອັບເດດກ່ຽວກັບໂຄວິດ-19

ຄາວຕີ້ຊາຄຣາເມັນໂຕ

ການລົງທະບຽນເພື່ອເລືອກຕັ້ງ ແລະການເລືອກຕັ້ງ

**7000 65th Street, Suite A**

**Sacramento, CA 95823**

**(800) 762-8019**

**voterinfo@saccounty.net**

**www.elections.saccounty.net**

ສາລະບານ

I. ສູນເລືອກຕັ້ງ ..... 4
A. ບໍລິການຕ່າງໆ ..... 4
B. ມີອຸປະກອນປ້ອງກັນສ່ວນບຸກຄົນ ຫຼື PPE ໃຫ້ທີ່ສູນເລືອກຕັ້ງທຸກແຫ່ງເພື່ອແຈກໃຫ້ເຈົ້າໜ້າທີ່ເລືອກຕັ້ງ, ຜູ້ມີສິດລົງຄະແນນສຽງ ແລະຜູ້ສັງເກດການ. ..... 5
○ ຖົງໃສ່ບັດເລືອກຕັ້ງ ..... 6
C. ແຜນຜັງແລະການຈັດຕັ້ງ: ..... 6
○ ສູນເລືອກຕັ້ງທີ່ບໍ່ມີແນວກັ້ນປະເພດຫ້ອຍລົງມາ ..... 7
• ສູນເລືອກຕັ້ງແຕ່ລະແຫ່ງຈະມີແຜນພາບຂອງການຈັດຕັ້ງ ..... 7
D. ປ້າຍ ..... 7
E. ການປ່ຽນແປງສະຖານທີ່/ຂັ້ນຕອນການປິດ. ..... 8
F. ສູນເລືອກຕັ້ງ/ການນຳສົ່ງ ..... 8
II. ເຈົ້າໜ້າທີ່ເລືອກຕັ້ງ (ຜູ້ເຮັດວຽກທີ່ສະຖານທີ່ລົງຄະແນນ) ..... 8
*A.* ການຮັບສະໝັກພະນັກງານ. ..... 8
*B.* ການຝຶກອົບຮົມ. ..... 8
*C.* ຜູ້ອຳນວຍການການຂົນສົ່ງ. ..... 9
*D.* ສະຖານະການທີ່ຫຍຸ້ງຍາກ. ..... 9
II. ຕູ້ປ່ອນບັດເລືອກຕັ້ງ ແລະການລວບລວມບັດເລືອກຕັ້ງ ..... 10
III. ການລົງທະບຽນເພື່ອເລືອກຕັ້ງແລະຫ້ອງການເລືອກຕັ້ງ ..... 10
A. ແຜນການຈັດຕັ້ງຫ້ອງການ ແລະແຜນການຂ້າເຊື້ອໂລກທົ່ວໄປ. ..... 10
• ແຜນການຂ້າເຊື້ອ ..... 11
B. ການນັບບັດເລືອກຕັ້ງ. ..... 11
C. ຜູ້ສັງເກດການ/ສື່ມວນຊົນ. ..... 12
IV. ການເຜີຍແຜ່ຂໍ້ມູນແລະການສົ່ງຂໍ້ຄວາມ ..... 12
A. ການເລືອກຕັ້ງທາງໄປສະນີ: ຊຸດເອກະສານເລືອກຕັ້ງທາງໄປສະນີຈະລວມມີ: ..... 12
• ບັດເລືອກຕັ້ງຢ່າງເປັນທາງການຂອງ ..... 12
C. ລະບຽບຂັ້ນຕອນຂອງສູນເລືອກຕັ້ງ. ..... 12
D. ຄວາມພະຍາຍາມໃນການ ..... 13
E. ເຄື່ອງມືແລະຂໍ້ມູນຕ່າງໆ: ..... 14
ເອກະສານຄັດຕິດ A – ຕົວຢ່າງປ້າຍ CVIG ..... 15

**ເອກະສານຄັດຕິດ** B – **ຕົວຢ່າງແຜນຜັງສູນເລືອກຕັ້ງ** ........ 16
**ເອກະສານຄັດຕິດ** C – **ຂັ້ນຕອນການຂ້າເຊື້ອສູນເລືອກຕັ້ງ** ........ 17
**ເອກະສານຄັດຕິດ** D – **ຕົວຢ່າງປ້າຍສູນເລືອກຕັ້ງ** (**ຍັງບໍ່ແນ່ນອນ**) ........ 18
**ເອກະສານຄັດຕິດ** E – **ແຜນຜັງການອົບຮົມເຈົ້າໜ້າທີ່ເລືອກຕັ້ງ** ........ 19
**ເອກະສານຄັດຕິດ** F – **ຕົວຢ່າງການອົບຮົມກ່ຽວກັບໂຄວິດ** ........ 20
**ເອກະສານຄັດຕິດ** G – **ຄໍາແນະນໍາໃນການລົດຄວາມຂັດແຍ້ງ** ........ 21
**ເອກະສານຄັດຕິດ** H – **ແຜນການຂ້າເຊື້ອຂອງ** VRE ........ 22
**ເອກະສານຄັດຕິດ** I – **ແຜນຜັງຂັ້ນຕອນການນັບບັດເລືອກຕັ້ງ** ........ 23

## ຄໍານໍາ:

ແມ່ນເປັນສິ່ງສໍາຄັນທີ່ບໍ່ມີຜູ້ມີສິດລົງຄະແນນສຽງຄົນໃດຈໍາເປັນຕ້ອງເລືອກລະຫວ່າງສຸຂະພາບຂອງເຂົາເຈົ້າແລະການມີສ່ວນຮ່ວມຢ່າງປອດໄພໃນການເລືອກຕັ້ງທົ່ວໄປເພື່ອເລືອກປະທານາທິບໍດີໃນວັນທີ 3 ເດືອນພະຈິກປີ 2020. ໃນຂະນະທີ່ບັນດາກໍລະນີໂລກລະບາດໂຄໂຣນາຍັງສືບຕໍ່ແຜ່ລາມໃນທົ່ວປະເທດ ທາງຄາວຕີ້ຊາຄຣາເມັນໂຕແມ່ນກໍາລັງກະກຽມການເລືອກຕັ້ງທີ່ຄົບຂັ້ນຕອນແລະປອດໄພສໍາລັບທຸກຄົນຢ່າງແຂງຂັນ

ການລົງທະບຽນເພື່ອເລືອກຕັ້ງ ແລະການເລືອກຕັ້ງຂອງຄາວຕີ້ຊາຄຣາເມັນໂຕ (Sacramento County Voter Registration & Elections ຫຼື VRE) ກໍານົດໃຫ້ບຸກຄົນທີ່ມີຄວາມຕັ້ງໃຈໃນການທໍາໜ້າທີ່ພົນລະເມືອງຫຼາຍພັນຄົນຊ່ວຍເຫຼືອໃນການບໍລິຫານຈັດການການເລືອກຕັ້ງ ເປົ້າໝາຍລວມຂອງຄາວຕີ້ຊາຄຣາເມັນໂຕແມ່ນການດໍາເນີນການເລືອກຕັ້ງພາຍໃຕ້ກົດໝາຍວ່າດ້ວຍການເລືອກຕັ້ງເດີມ (Voter's Choice Act) ໂດຍສະເໜີຈໍານວນສູນເລືອກຕັ້ງເທົ່າກັນເປັນເວລາ 11 ວັນ ແລະ 4 ວັນຄືກັນກັບທີ່ພວກເຮົາໄດ້ເຮັດໃນການເລືອກຕັ້ງເພື່ອເລືອກປະທານາທິບໍດີຄັ້ງທໍາອິດໃນເດືອນມີນາ. ເຖິງຢ່າງໃດກໍ່ຕາມຈໍານວນສະຖານທີ່ແນ່ນອນຂອງພວກເຮົາແມ່ນຂຶ້ນກັບຄວາມພ້ອມຂອງສະຖານທີ່ແລະຄວາມພ້ອມຂອງເຈົ້າໜ້າທີ່ເລືອກຕັ້ງ

ຄາວຕີ້ຊາຄຣາເມັນໂຕວາງແຜນທີ່ຈະດໍາເນີນການເລືອກຕັ້ງນີ້ໂດຍອີງຕາມຄໍາແນະນໍາຂອງລັດທະມົນຕີກະຊວງການຕ່າງປະເທດພາຍໃຕ້ສະຖານະການໂຄວິດ-19 [Secretary of State's Election Administration Guidance under COVID-19](#).

ເປົ້າໝາຍຂອງພວກເຮົາແມ່ນເພື່ອໃຫ້ໃຫ້ແນ່ໃຈວ່າຜູ້ມີສິດລົງຄະແນນສຽງຂອງເຮົາແລະຜູ້ເຮັດວຽກທີ່ສະຖານທີ່ລົງຄະແນນຮັກສາສຸຂະພາບແລະຄວາມປອດໄພໃນຂະນະທີ່ໃຫ້ບໍລິການທີ່ຈໍາເປັນນີ້ແກ່ຊຸມຊົນຂອງເຮົາ ແຜນນີ້ຈະສະແດງລາຍລະອຽດກ່ຽວກັບວິທີການທີ່ພວກເຮົາວາງແຜນເພື່ອໃຫ້ບັນລຸເປົ້າໝາຍດຽວກັບສູນເລືອກຕັ້ງ, ການຝຶກອົບຮົມເຈົ້າໜ້າທີ່ເລືອກຕັ້ງ (ຜູ້ເຮັດວຽກທີ່ສະຖານທີ່ລົງຄະແນນ), ກ່ອງປ່ອນບັດເລືອກຕັ້ງ, ການນັບບັດເລືອກຕັ້ງ, ຜູ້ສັງເກດການ/ສື່ມວນຊົນ ແລະການເຜີຍແຜ່ແລະການສົ່ງຂໍ້ຄວາມສື່ສານ.

I. ສູນເລືອກຕັ້ງ

A. ບໍລິການຕ່າງໆ

- ***ການເລືອກຕັ້ງດ້ວຍຕົນເອງ ຫຼືຮັບບັດເລືອກຕັ້ງ "ທູໂກ".***
  ການບໍລິການຈະຍັງຄົງມີຄືກັນໃນທຸກສູນເລືອກຕັ້ງ. ຜູ້ມີສິດລົງຄະແນນສຽງຈະສາມາດສືບຕໍ່ລົງຄະແນນສຽງດ້ວຍຕົນເອງຫຼືຮັບບັດເລືອກຕັ້ງຂອງເຂົາເຈົ້າໄດ້ຈາກທີ່ຕັ້ງສູນເລືອກຕັ້ງໃດກໍ່ໄດ້. ນອກຈາກນັ້ນຜູ້ມີສິດລົງຄະແນນສຽງ ຫຼືຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ມີສິດລົງຄະແນນສຽງສາມາດປະກອບແບບຟອມອະນຸຍາດໃຫ້ຮັບບັດເລືອກຕັ້ງ [Ballot Pick-up Authorization form] ເພື່ອໃຫ້ຜູ້ອື່ນສາມາດຮັບບັດເລືອກຕັ້ງແທນຜູ້ມີສິດລົງຄະແນນສຽງໄດ້ທີ່ຫ້ອງການຂອງເຮົາທີ່ 7000 65th Street, Ste A ຫຼືຮັບໄດ້ຈາກບ່ອນທີ່ຕັ້ງສູນເລືອກຕັ້ງ. ການເຮັດເຊັ່ນນີ້ຈະອະນຸຍາດໃຫ້ຜູ້ມີສິດລົງຄະແນນສຽງສາມາດກາໝາຍບັດເລືອກຕັ້ງໄດ້ສຳເລັດ. ພວກເຮົາຂໍແນະນຳໃຫ້ປ່ອນບັດເລືອກຕັ້ງເຫຼົ່ານີ້ທີ່ສະຖານທີ່ຕັ້ງຕູ້ປ່ອນບັດໃດໆ ຫຼືທີ່ສູນເລືອກຕັ້ງ.
- ***ການເຂົ້າເຖິງ.***
  ການລົງຄະແນນສຽງຈາກແຄມທາງແລະອຸປະກອນກາໝາຍບັດລົງຄະແນນຢ່າງໜ້ອຍສາມເຄື່ອງ (ອຸປະກອນ Dominion's ImageCast X ທີ່ມີຊື່ວ່າ "ICX") ຈະສືບຕໍ່ສະໜອງໃຫ້ຢູ່ທຸກສະຖານທີ່ຕັ້ງສູນເລືອກຕັ້ງ.
- ***ການຊ່ວຍເຫຼືອຜູ້ມີສິດລົງຄະແນນສຽງ***
  - ອຸປະກອນ Guide Tethers ຈະມີໃຫ້ເພື່ອຊ່ວຍນຳທາງຜູ້ມີສິດລົງຄະແນນສຽງທີ່ຕາມບອດຫຼືມີວິໄສທັດຕໍ່າໄປທີ່ຕູ້ບູດ, ເຄື່ອງ ICX, ໂຕະ ຫຼືສະຖານທີ່ຍືນໃນຂະນະລໍຖ້າ.
  - ຜູ້ມີສິດລົງຄະແນນສຽງທີ່ມີຄວາມພິການຈະໄດ້ຮັບຄຳແນະນຳໃຫ້ບອກເຈົ້າໜ້າທີ່ເລືອກຕັ້ງຊາບເມື່ອເຂົ້າມາເພື່ອໃຫ້ແນ່ໃຈວ່າພວກເຂົາເຈົ້າໄດ້ຮັບການຊ່ວຍເຫຼືອຢ່າງພຽງພໍ.

- ອະນຸຍາດໃຫ້ຜູ້ມີສິດລົງຄະແນນສຽງມີຜູ້ຊ່ວຍເຫຼືອເຂົ້າມາເພື່ອຊ່ວຍເຫຼືອປ່ອນບັດເລືອກຕັ້ງໄດ້ເຖິງສອງຄົນ. ຈະມີໜ້າກາກໃຫ້ກັບທຸກຄົນລວມທັງເດັກນ້ອຍ.
- ຖ້າຜູ້ມີສິດລົງຄະແນນສຽງບໍ່ສາມາດຫຼືຈະບໍ່ໃສ່ໜ້າກາກ ເຈົ້າໜ້າທີ່ເລືອກຕັ້ງຈະຕ້ອງຢູ່ຫ່າງຈາກຜູ້ມີສິດລົງຄະແນນສຽງ 6 ຟຸດຕະຫຼອດເວລາ.
  ຖ້າຜູ້ມີສິດລົງຄະແນນສຽງບໍ່ສາມາດຫຼືຈະບໍ່ໃສ່ໜ້າກາກແຕ່ຕ້ອງການຄວາມຊ່ວຍເຫຼືອເຊິ່ງ ເຈົ້າໜ້າທີ່ເລືອກຕັ້ງຕ້ອງຢູ່ໃກ້ກວ່າ 6 ຟຸດ ເຈົ້າໜ້າທີ່ເລືອກຕັ້ງຜູ້ນັ້ນຈະຕ້ອງໃສ່ໜ້າກາກພ້ອມແຜ່ນປ້ອງກັນໜ້າ ຫຼືໃຊ້ອຸປະກອນກັ້ນທີ່ສາມາດຍົກຍ້າຍໄດ້ເພື່ອປ້ອງກັນເພີ່ມເຕີມ.

* **ຂໍ້ມູນທີ່ເປັນເອກະສານ/ຂໍ້ມູນທີ່ຈັບຕ້ອງໄດ້**
  - ຄຳແນະນຳສຳລັບຜູ້ມີສິດລົງຄະແນນສຽງຂອງລັດທີ່ເປັນເອກະສານ ແລະຂໍ້ມູນກ່ຽວກັບມາດຕະການຈະມີຢູ່ໃນຕາລາງເອກະສານຂໍ້ມູນສະບັບແປພາສາ (Language Materials Table).
    ເຖິງຢ່າງໃດກໍ່ຕາມພວກເຮົາຈະມີປ້າຍພ້ອມລະຫັດຄິວອາເພື່ອໃຫ້ຜູ້ມີສິດລົງຄະແນນສຽງສາມາດເຂົ້າເຖິງປື້ມຄູ່ມືຂໍ້ມູນສຳລັບຜູ້ມີສິດລົງຄະແນນສຽງຂອງຄາວຕີ້ ຫຼືປື້ມຄູ່ມືຂໍ້ມູນສຳລັບຜູ້ມີສິດລົງຄະແນນສຽງຂອງລັດທາງໂທລະສັບສະມາດໂຟນຂອງພວກເຂົາເຈົ້າ.
    ພວກເຮົາຍັງຈະຊຸກຍູ້ໃຫ້ຜູ້ມີສິດລົງຄະແນນສຽງນຳໃຊ້ບັດເລືອກຕັ້ງຕົວຢ່າງຂອງພວກເຂົາເຊິ່ງມີຢູ່ໃນປື້ມຄູ່ມືຂໍ້ມູນສຳລັບຜູ້ມີສິດລົງຄະແນນສຽງຂອງຄາວຕີ້ເພື່ອກາໝາຍບັດກ່ອນທີ່ຈະມາສູນເລືອກຕັ້ງ ແລະເພື່ອຊ່ວຍຈຳກັດເວລາຂອງພວກເຂົາໃນບໍລິເວນເລືອກຕັ້ງ.
    (ເບິ່ງຕົວຢ່າງໃນ**ເອກະສານຄັດຕິດ A**)
  - ຈະບໍ່ມີຊອງຈົດໝາຍປົດເປັນຄວາມລັບ (Secrecy Sleeves) ໃຫ້. ຜູ້ມີສິດລົງຄະແນນສຽງຄົນໃດທີ່ຕ້ອງການຄວາມເປັນສ່ວນຕົວເປັນພິເສດຈະໄດ້ຮັບການຮ້ອງຂໍໃຫ້ພັບບັດເລືອກຕັ້ງຂອງເຂົາເຈົ້າເຄິ່ງໜຶ່ງຫຼັງຈາກທີ່ໄດ້ກາໝາຍບັດເລືອກຕັ້ງແລ້ວແທນ.
  - ຈະບໍ່ມີເຈ້ຍການສຳຫຼວດປະສົບການໃນການໃຊ້ສູນເລືອກຕັ້ງໃຫ້ໃນການເລືອກຕັ້ງຄັ້ງນີ້ ແຕ່ຈະຍັງຄົງມີບັດໃຫ້ຜູ້ມີສິດລົງຄະແນນສຽງໂທກັບຄືນເພື່ອສອບຖາມ, ແຈ້ງຂໍ້ກັງວົນ, ສະແດງຄວາມຄິດເຫັນ ຫຼືກວດສອບສະຖານະພາບຂອງບັດເລືອກຕັ້ງຂອງເຂົາເຈົ້າ.
  - ໃນຂະນະທີ່ VRE ຈະສະໜອງເອກະສານສຳເນົາບັດເລືອກຕັ້ງທີ່ແປພາສາລວມເຊິ່ງມີຊື່ວ່າຄູ່ມືບັດເລືອກຕັ້ງສະບັບແປພາສາ ຈະມີສຳເນົາໃຫ້ຕາມການຮ້ອງຂໍເຊິ່ງຈະສາມາດພິມໄດ້ຈາກເຈົ້າໜ້າທີ່ເຊັກອິນ.

B. **ມີອຸປະກອນປ້ອງກັນສ່ວນບຸກຄົນ ຫຼື PPE ໃຫ້ທີ່ສູນເລືອກຕັ້ງທຸກແຫ່ງເພື່ອແຈກໃຫ້ເຈົ້າໜ້າທີ່ເລືອກຕັ້ງ, ຜູ້ມີສິດລົງຄະແນນສຽງ ແລະຜູ້ສັງເກດການ.**

* ໜ້າກາກທີ່ຫໍ່ແຍກກັນແລະມີຂະໜາດສຳລັບເດັກນ້ອຍພ້ອມນຳ
  - ຜູ້ມີສິດລົງຄະແນນສຽງຈະໄດ້ຮັບການສໍາໜັບສະໜູນຢ່າງສູງໃຫ້ໃສ່ໜ້າກາກ ແຕ່ຜູ້ມີສິດລົງຄະແນນສຽງຈະບໍ່ຖືກປະຖິ້ມຖ້າບໍ່ໃສ່ໜ້າກາກ.
  - ຈະມີໜ້າກາກສະເໜີໃຫ້ຜູ້ມີສິດລົງຄະແນນສຽງທຸກຄົນທີ່ບໍ່ມີໜ້າກາກ.
  - ເຈົ້າໜ້າທີ່ເລືອກຕັ້ງຈະໄດ້ຮັບບົດຂຽນກ່ຽວກັບວິທີການຈັດການກັບສະຖານະການເຫຼົ່ານີ້ (ເບິ່ງຂໍ້ (II)(D) ສະຖານະການຫຍຸ້ງຍາກ)
* ຖົງມືປະເພດໃຊ້ໃນການຈັບອາຫານຄັ້ງດຽວຖິ້ມມີໃຫ້ທີ່ສະຖານີເຈົ້າໜ້າທີ່ເລືອກຕັ້ງ
  - ປ່ຽນຫຼັງຈາກໃຫ້ບໍລິການຜູ້ມີສິດລົງຄະແນນສຽງທຸກຄົນ ຫຼືຫຼັງການປະຕິສັມພັນທຸກຄັ້ງ

- ຖ້າບໍ່ມີຖົງມື ໃຫ້ອານາໄມມືຫຼັງຈາກໃຫ້ບໍລິການຜູ້ມີສິດລົງຄະແນນສຽງທຸກຄົນ
- ປາກກາໃຊ້ຄັ້ງດຽວ
- ນໍ້າຢາທໍາຄວາມສະອາດມືມີໃຫ້ທົ່ວໄປໃນສູນເລືອກຕັ້ງແລະສະຖານີເຈົ້າໜ້າທີ່ເລືອກຕັ້ງທຸກແຫ່ງເພື່ອອານາໄມເມື່ອເຂົ້າມາ
- ມີແຜ່ນປ້ອງກັນໜ້າໃຫ້ຕາມການຮ້ອງຂໍ ແລະຈະສະເໜີໃຫ້ເປັນທາງເລືອກສໍາລັບຜູ້ມີສິດລົງຄະແນນສຽງຜູ້ທີ່ປະຕິເສດທີ່ຈະໃສ່ໜ້າກາກ
- ແຜ່ນພັດສະຕິກປ້ອງກັນ
- ຈະນໍາໃຊ້ແອກໍຮໍ MG Chemicals 70% Isopropyl ເພື່ອຂ້າເຊື້ອ:
  - ເຄື່ອງ ICX ຫຼັງການນໍາໃຊ້ທຸກຄັ້ງ
  - ບັດເປີດໃຊ້ ICX
  - ຕູ້ບູດເລືອກຕັ້ງຫຼັງການນໍາໃຊ້ທຸກຄັ້ງ
  - ແລັບທອບ, ເຄື່ອງພິມ, ເຄື່ອງພິມປ້າຍ DYMO, ອຸປະກອນ USB ລວມເຖິງເຄື່ອງພິມປະເພດຍົກຍ້າຍໄດ້ຂອງເຈົ້າໜ້າທີ່ເລືອກຕັ້ງ
  - ຖົງໃສ່ບັດເລືອກຕັ້ງຫຼັງຈາກການສໍາຜັດ
  - ແຜ່ນພັດສະຕິກປ້ອງກັນ: ສະເພາະທີ່ຖືກສໍາຜັດແລ້ວ ຖືກຈາມໃສ່ ຖືກໄອໃສ່ ຫຼືຫຼັງຈາກໃຫ້ບໍລິການຜູ້ມີສິດລົງຄະແນນສຽງທີ່ບໍ່ໃສ່ໜ້າກາກເທົ່ານັ້ນ
  - ອຸປະກອນ Guide Tethers
  - ໂຕະແລະຕັ່ງຫຼັງການນໍາໃຊ້ທຸກຄັ້ງ
  - ແນວກັ້ນທາງເດີນ

  ຈະມີເອກະສານຄູ່ມືຄວາມປອດໄພສານເຄມີ (Material Safety Data Sheets ຫຼື MSDS) ໃຫ້ທຸກສູນເລືອກຕັ້ງ ເຊິ່ງສະໜອງຂໍ້ມູນກ່ຽວກັບການປິ່ນປົວພະນັກງານຖ້າພວກເຂົາຖືກຕິດຕໍ່ກັບສານເຄມີທີ່ເຮັດໃຫ້ລະຄາຍເຄືອງ.

C. **ແຜນຜັງແລະການຈັດຕັ້ງ:**

- ຈະມີປ້າຍຕິດຕັ້ງເພື່ອແຈ້ງໃຫ້ຊາບເຖິງຈໍານວນຄົນສູງສຸດທີ່ອະນຸຍາດໃຫ້ເຂົ້າໄປໃນບໍລິເວນເລືອກຕັ້ງໃນເວລາດຽວກັນທີ່ທຸກສູນເລືອກຕັ້ງ. ບຸກຄົນຕ່າງໆລວມເຖິງຜູ້ມີສິດລົງຄະແນນສຽງ, ຜູ້ສັງເກດການ, ໝູ່/ຄອບຄົວທີ່ຊ່ວຍເຫຼືອຜູ້ມີສິດລົງຄະແນນສຽງ ແລະເຈົ້າໜ້າທີ່ເລືອກຕັ້ງ ສູດທີ່ໃຊ້ໃນການກໍານົດຕົວເລກນີ້ແມ່ນຄົນໜຶ່ງຕໍ່ 100 ຕາລາງຟຸດ. ເຈົ້າໜ້າທີ່ເລືອກຕັ້ງທີ່ຮູ້ກັນໃນນາມເຈົ້າໜ້າທີ່ຊ່ວຍເຫຼືອຈະຢືນຢູ່ນອກສູນເລືອກຕັ້ງທຸກແຫ່ງດ້ວຍໜ້າທີ່ຮັບຜິດຊອບດັ່ງຕໍ່ໄປນີ້:
  - ຕິດຕາມກວດກາຈະນວນຄົນເຂົ້າໃຊ້ງານສູງສຸດ (ຈະມີອຸປະກອນວິທະຍຸສື່ສານໃຫ້ນໍາໃຊ້ໃນບັນດາສູນທີ່ມີຂະໜາດໃຫຍ່ກວ່າ)
  - ຮັບບັດລົງເລືອກຕັ້ງທາງໄປສະນີທີ່ຜູ້ມີສິດລົງຄະແນນສຽງນໍາມາປ່ອນ ຜູ້ມີສິດລົງຄະແນນສຽງສາມາດປ່ອນບັດເລືອກຕັ້ງຂອງເຂົາເຈົ້າທີ່ກາໝາຍແລ້ວເທົ່ານັ້ນ ແຕ່ຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນບໍລິເວນເລືອກຕັ້ງ ເວັ້ນເສຍແຕ່ວ່າພວກເຂົາຈະຮ້ອງຂໍຄວາມຊ່ວຍເຫຼືອເພີ່ມເຕີມ. ຈະມີກາວແຫ່ງໃຫ້ທີ່ສູນເລືອກຕັ້ງທຸກແຫ່ງເພື່ອປິດຊອງຈົດໝາຍ.
  - ສະເໜີໜ້າກາກທີ່ຫໍ່ແຍກກັນໃຫ້ກັບຜູ້ມີສິດລົງຄະແນນສຽງທຸກຄົນທີ່ບໍ່ມີ, ສະເໜີໜ້າກາກໃຫ້ກັບເດັກນ້ອຍຫຼືຄົນອື່ນທີ່ອາດຈະກໍາລັງຊ່ວຍເຫຼືອຜູ້ມີສິດລົງຄະແນນສຽງ.
  - ຜູ້ສັງເກດການ. ຜູ້ດູແລການເລືອກຕັ້ງ, ຜູ້ກວດກາ, ຕົວແທນຜູ້ຫາສຽງຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນບໍລິເວນເລືອກຕັ້ງໂດຍບໍ່ໃສ່ໜ້າກາກ. ບໍ່ມີຂໍ້ຍົກເວັ້ນ.

  - ສູນເລືອກຕັ້ງທີ່ບໍ່ມີແບວກັ້ນປະເພດຫ້ອຍລົງມາທາງນອກຈະໄດ້ຮັບເຕັ້ນປະເພດກັ້ນນ້ຳ.
- ສຳລັບສູນເລືອກຕັ້ງທີ່ມີປະຕູຫຼາຍກວ່າໜຶ່ງທາງຈະມີປ້າຍລະບຸ "ທາງເຂົ້າ" ແລະ "ທາງອອກ" ຕິດໄວ້ຢ່າງຊັດເຈນ. ສຳລັບສູນເລືອກຕັ້ງທີ່ມີປະຕູທາງເຂົ້າ/ທາງອອກທາງດຽວເທົ່ານັ້ນ ເຈົ້າໜ້າທີ່ຊ່ວຍເຫຼືອຈະກວດກາເບິ່ງຄວາມແອອັດທີ່ປະຕູ.
- ສູນເລືອກຕັ້ງແຕ່ລະແຫ່ງຈະມີແຜນພາບຂອງການຈັດຕັ້ງທີ່ລວມເຖິງຈຳນວນຄົນສູງສຸດ ແລະບໍລິເວນສຳລັບໃຫ້ຄົນຍືນເພື່ອຮັກສາໄລຍະຫ່າງທາງສັງຄົມ. (ເບິ່ງຕົວຢ່າງໃນ**ເອກະສານຄັດຕິດ B**)
- ເທບສີຟ້າຈະລະບຸບໍລິເວນທີ່ຜູ້ມີສິດລົງຄະແນນສຽງຕ້ອງຍືນຂະນະລໍຖ້າເພື່ອເຊັກອິນ, ລໍຖ້າເອົາບັດເລືອກຕັ້ງຂອງເຂົາເຈົ້າ ຫຼືບັດເປີດໃຊ້ ICX, ລໍຖ້າຕູ້ບູດເລືອກຕັ້ງ ຫຼືລໍຖ້າອຸປະກອນ ICX. ຈະມີການຈັດທຳເຄື່ອງໝາຍເຫຼົ່ານີ້ກ່ອນການເລືອກຕັ້ງໂດຍທັງເຈົ້າໜ້າທີ່ເລືອກຕັ້ງ (ພາຍນອກ) ແລະທີມຈັດຫາເຄື່ອງຂອງເຮົາທີ່ປະຕິບັດໜ້າທີ່ສົ່ງມອບອຸປະກອນ (ພາຍໃນ).
- ຈະມີແບວກັ້ນທາງເດີນສະໜອງໃຫ້ໃນສູນເລືອກຕັ້ງທີ່ໃຫຍ່ກວ່າເພື່ອຊ່ວຍໃນການຈັດຄິວດ້ານໃນຫຼືດ້ານນອກຂອງສູນເລືອກຕັ້ງ.
- ຈະມີການຕິດຕັ້ງແຜ່ນພັດສະຕິກປ້ອງກັນທີ່ສະຖານີເຈົ້າໜ້າທີ່ເຊັກອິນ, ສະຖານີເຈົ້າໜ້າທີ່ດູແລບັດເລືອກຕັ້ງ ແລະສະຖານີເຈົ້າໜ້າທີ່ CVR. ຈະຈັດແຜ່ນປ້ອງກັນເພີ່ມເຕີມໃຫ້ກັບແຕ່ລະສະຖານທີ່ເພື່ອຈັດວາງຫຼືນຳໃຊ້ຕາມຈຳເປັນ.
- ສະຖານທີ່ເລືອກຕັ້ງຈະຮ້ອງຂໍເອົາຕັ່ງເພີ່ມເຕີມເພື່ອນຳໃຊ້ ຫຼືທາງ VRE ຈະແຈກໃຫ້ຖ້າສະຖານທີ່ນັ້ນບໍ່ສາມາດສະໜອງຕັ່ງເພີ່ມເຕີມໄດ້ 20 ຕົວ. ຕັ່ງເຫຼົ່ານີ້ຈະຖືກສະຫງວນໄວ້ສຳລັບຜູ້ມີສິດລົງຄະແນນສຽງທີ່ເຂົ້າຄິວລໍຖ້າ.
- ຈະມີການຕິດຕັ້ງບໍລິເວນທີ່ຖືກກຳນົດໃຫ້ເປັນ "ສະຖານີອະນາໄມ" (ລະບຸໄວ້ເປັນ "S" ໃນ**ເອກະສານຄັດຕິດ A**) ພ້ອມນ້ຳຢາທຳຄວາມສະອາດມືແລະເຈວລ້າງມື.
- ແຕ່ລະສະຖານີຈະສະໜອງຖົງໃສ່ຂີ້ເຫຍື້ອທີ່ແຍກປະເພດຂີ້ເຫຍື້ອ, ໜ້າກາກທີ່ໃຊ້ແລ້ວ, ຖົງມືທີ່ໃຊ້ແລ້ວ, ປາກກາທີ່ໃຊ້ແລ້ວ ແລະອື່ນໆ.
- ຈະແຈກປາກກາໃຊ້ຄັ້ງດຽວເທົ່ານັ້ນໃຫ້ກັບຜູ້ມີສິດລົງຄະແນນສຽງທີ່ສະຖານີເຈົ້າໜ້າທີ່ດູແລບັດເລືອກຕັ້ງ ຫຼືສະຖານີເຈົ້າໜ້າທີ່ CVR. ຈະມີປາກກາໃຫ້ທີ່ສະຖານີເຈົ້າໜ້າທີ່ເຊັກອິນພ້ອມກັບເຈ້ຍລອງຂຽນເພື່ອຊ່ວຍແກ້ບັນຫາອຸປະສັກດ້ານການສື່ສານ.
- ຈະມີລະບຽບຂັ້ນຕອນການຂ້າເຊື້ອໃຫ້ກັບສູນເລືອກຕັ້ງທຸກແຫ່ງໃນປຶ້ມຄູ່ມືສູນເລືອກຕັ້ງ (ເບິ່ງຕົວຢ່າງໃນ**ເອກະສານຄັດຕິດ C**). ເຈົ້າໜ້າທີ່ເລືອກຕັ້ງຈະຕ້ອງໄດ້ຂ້າເຊື້ອທີ່ສະຖານີຂອງຕົນເອງທຸກໆເຊົ້າ ແລະໃນຕອນກາງຄືນຖ້າບໍ່ກັບຄືນສະຖານີແຫ່ງນັ້ນໃນມື້ຕໍ່ມາ. ເຈົ້າໜ້າທີ່ຊ່ວຍເຫຼືອຈະຮັບຜິດຊອບໃນການຂ້າເຊື້ອແລະກວດກາຕູ້ບູດແລະເຄື່ອງ ICX.
- ຈະມີການສະເໜີໃຫ້ການບໍລິການເຮັດຄວາມສະອາດແບບເລິກເຊິ່ງລວມທັງການເຮັດຄວາມສະອາດພື້ນຜິວແຂງ, ພື້ນ, ຈຸດສຳຜັດ ແລະຕົວກອງ HEPA ກັບສູນເລືອກຕັ້ງທຸກແຫ່ງ.

**D. ປ້າຍ – ຕົວຢ່າງໃນເອກະສານຄັດຕິດ D**

- "ເຮົາຂໍໃຫ້ທ່ານໃສ່ໜ້າກາກ" ເປັນສາມພາສາພາຍໃນແລະພາຍນອກສູນເລືອກຕັ້ງທຸກແຫ່ງ
- ປ້າຍທາງອອກ/ທາງເຂົ້າເປັນສາມພາສາ
- ປ້າຍຜູ້ສັງເກດການ/ຜູ້ດູສັງເກດການເລືອກຕັ້ງເປັນພາສາອັງກິດເທົ່ານັ້ນ

- ປ້າຍລະບຸຈຳນວນຄົນໃຊ້ບໍລິການສູງສຸດຂອງຄາວຕີ້ຊາຄຣາເມັນໂຕທີ່ທຸລະກິດໃນຄາວຕີ້ຊາຄຣາເມັນໂຕນຳໃຊ້ແລ້ວເປັນສາມພາສາ
- ປ້າຍ "ເຂົ້າຄິວທີ່ນີ້"
- ປ້າຍຕົວເລກຈະຖືກຕິດເທິງຕູ້ບູດເລືອກຕັ້ງ
- ປ້າຍສະຖານີອະນາໄມ

E. **ການປ່ຽນແປງສະຖານທີ່/ຂັ້ນຕອນການປິດ.**
ມີໂອກາດເປັນໄປໄດ້ວ່າຫຼັງຈາກການປະກາດເຜີຍແຜ່ສະຖານທີ່ໃນປຶ້ມຄູ່ມືຂໍ້ມູນສຳລັບຜູ້ມີສິດລົງຄະແນນສຽງຂອງຄາວຕີ້ຂອງເຮົາແລ້ວນັ້ນ ສູນເລືອກຕັ້ງອາດຈະບໍ່ສາມາດເປີດໃຊ້ງານໄດ້ເນື່ອງຈາກສະຖານທີ່ຫຼືຂາດເຈົ້າໜ້າທີ່ເລືອກຕັ້ງ. ຖ້າສິ່ງນີ້ເກີດຂຶ້ນຄາວຕີ້ຊາຄຣາເມັນໂຕຈະເຮັດສິ່ງຕໍ່ໄປນີ້:
- ແຈກກະດານຕັ້ງພ້ອມປ້າຍລະບຸການປິດໃຫ້ສູນເລືອກຕັ້ງທີ່ປິດພ້ອມລາຍຊື່ແລະແຜນທີ່ຂອງທີ່ຕັ້ງສູນເລືອກຕັ້ງທີ່ຢູ່ໃກ້ທີ່ສຸດ
- ມອບໝາຍໃຫ້ທີມງານທີມລະສອງຄົນໄປຢືນທາງນອກສູນເລືອກຕັ້ງທີ່ປິດພ້ອມກັບຖົງສີບັວໃສ່ບັດເລືອກຕັ້ງທາງໄປສະນີເພື່ອເກັບລວບລວມບັດເລືອກຕັ້ງຈາກປະຊາຊົນຜູ້ທີ່ພຽງແຕ່ອອກໄປປ່ອນບັດເລືອກຕັ້ງ
- ອັບເດດເວັບໄຊຂອງເຮົາ, ເຄື່ອງມືຊອກຫາຜູ້ມີສິດລົງຄະແນນສຽງ, ແອັບ SacVote ແລະເຮັດຂ່າວເພື່ອແຈກໃຫ້ສື່ມວນຊົນ
- ເຮັດໃຫ້ແນ່ໃຈວ່າພະນັກງານຕົວແທນທີ່ເຮັດໜ້າທີ່ຮັບໂທລະສັບຂອງ VRE ຊາບເຖິງການປ່ຽນແປງນີ້

F. **ສູນເລືອກຕັ້ງ/ການນຳສົ່ງບັດເລືອກຕັ້ງ.**
ພະນັກງານສູນເລືອກຕັ້ງແລະພະນັກງານຂົນສົ່ງບັດເລືອກຕັ້ງທີ່ໄດ້ຮັບມອບໝາຍຕ້ອງໃສ່ຖົງມືໃນເວລາຂົນສົ່ງເອກະສານ. ພະນັກງານທີ່ VRE ຈະໃສ່ຖົງມືເພື່ອຮັບເອກະສານຫຼືບັດເລືອກຕັ້ງຈາກສະຖານທີ່ແຕ່ລະແຫ່ງ ຫຼືຈາກພະນັກງານຂົນສົ່ງບັດເລືອກຕັ້ງ. ພະນັກງານຂົນສົ່ງບັດເລືອກຕັ້ງທີ່ນຳໃຊ້ລົດຂອງຄາວຕີ້ຫຼືລົດເຊົ່າຈະຕ້ອງຂ້າເຊື້ອທີ່ລົດກ່ອນທີ່ຈະຢຸດເຊົາວຽກການຂອງພວກເຂົາ.

## II. ເຈົ້າໜ້າທີ່ເລືອກຕັ້ງ (ຜູ້ເຮັດວຽກທີ່ສະຖານທີ່ລົງຄະແນນ)

***A.*** ***ການຮັບສະໝັກພະນັກງານ.*** ໃນເດືອນກໍລະກົດ ປີ 2020 ບັດທີ່ມີໄດ້ຖືກສົ່ງໄປໃຫ້ກັບເຈົ້າໜ້າທີ່ເລືອກຕັ້ງຫຼາຍກວ່າ 10,000 ຄົນທີ່ຄາວຕີ້ຊາຄຣາເມັນໂຕມີໃນບັນທຶກ. ເຈົ້າໜ້າທີ່ເລືອກຕັ້ງສາມາດປະກອບບັດແລະນຳສົ່ງຄືນບັດນັ້ນທີ່ເສຍຄ່າສົ່ງທາງໄປສະນີແລ້ວເພື່ອຢືນຢັນ ຫຼືຢືນຢັນທາງອອນລາຍແລ້ວວ່າພວກເຂົາເຈົ້າວ່າງສຳລັບການເລືອກຕັ້ງໃນວັນທີ 3 ເດືອນພະຈິກປີ 2020. ນອກຈາກນັ້ນຍັງມີພື້ນທີ່ເພື່ອໃຫ້ເຈົ້າໜ້າທີ່ເລືອກຕັ້ງໃຫ້ຄຳເຫັນສະແດງຄວາມກັງວົນກ່ຽວກັບການເລືອກຕັ້ງນີ້ ໂດຍມີຄຳເຫັນສ່ວນຫຼາຍທີ່ກ່ຽວຂ້ອງກັບ PPE ທີ່ຈະມີໃຫ້. ພວກເຮົາຈະເຮັດຢ່າງສຸດຄວາມສາມາດທີ່ຈະໃຫ້ມີເຈົ້າໜ້າທີ່ເລືອກຕັ້ງປະເພດ "ສະແຕນບາຍ" ທີ່ໄດ້ຮັບການຝຶກອົບຮົມແລ້ວທີ່ສາມາດປະຕິບັດງານແທນໄດ້ເພື່ອຊ່ວຍເຫຼືອໃນສູນເລືອກຕັ້ງທີ່ຫຍຸ້ງຍາກ ຫຼືພວກເຂົາສາມາດເຂົ້າມາປະຕິບັດງານແທນໄດ້ເລີຍ.

***B.*** ***ການຝຶກອົບຮົມ.*** ເນື້ອໃນຂອງການຝຶກອົບຮົມສ່ວນຫຼາຍແມ່ນຈະມີໃຫ້ຜ່ານພໍທັນ Election Officer EasyVote ຂອງເຮົາເຊິ່ງຈະປະກອບດ້ວຍແຜ່ນສະໄລ້ PowerPoint ພ້ອມສຽງແລະວິດີໂອ. ຈຳເປັນຕ້ອງມີຈຳນວນຂັ້ນຕໍ່າຂອງເຈົ້າໜ້າທີ່ເລືອກຕັ້ງທີ່ຮັບການຝຶກອົບຮົມດ້ວຍຕົນເອງເພື່ອໃຫ້ສາມາດຈັດໄດ້ທີ່ສຳນັກງານໃຫຍ່ VRE ທີ່ຢູ່ເລກທີ 7000 65th Street. ການຝຶກອົບຮົມນີ້ຈະເປັນ

ການຝຶກອົບລົມປະເພດ “ພ້ອມປະຕິບັດງານ” ພ້ອມແລັບທອບເພື່ອເຊັກອິນ, ເຄື່ອງພິມບັດເລືອກຕັ້ງປະເພດຍົກຍ້າຍໄດ້ ແລະເຄື່ອງ ICX ຜູ້ເຂົ້າຮັບການອົບລົມແຕ່ລະຄົນຈະໄດ້ຮັບຊຸດອຸປະກອນຂອງຕົນເອງພ້ອມຈຳນວນເຈົ້າໜ້າທີ່ເລືອກຕັ້ງຂັ້ນຕ່ຳທີ່ອະນຸຍາດໃຫ້ເຂົ້າອົບລົມໄດ້ໃນແຕ່ລະຊັ້ນຮຽນ. **ເອກະສານຄັດຕິດ E** ສະແດງຂໍ້ມູນແຜນຜັງສຳລັບການຝຶກອົບລົມປະເພດ “ພ້ອມປະຕິບັດງານ” ເຈົ້າໜ້າທີ່ເລືອກຕັ້ງທຸກຄົນຈະຕ້ອງໃສ່ໜ້າກາກຕະຫຼອດການຝຶກອົບລົມແລະທີ່ສູນເລືອກຕັ້ງ.

ນອກຈາກນັ້ນເຈົ້າໜ້າທີ່ເລືອກຕັ້ງຈະໄດ້ຮັບການຝຶກອົບລົມກ່ຽວກັບໂຄວິດ-19 ທີ່ພະແນກບໍລິການງານບຸກຄະລາກອນຂອງຄາວຕີ້ຊາຄຼາເມັນໂຕສ້າງຕັ້ງຂຶ້ນ (**ເອກະສານຄັດຕິດ F**). ເຈົ້າໜ້າທີ່ກວດກາຍັງຈະຕ້ອງຜ່ານຂັ້ນຕອນການຝຶກອົບລົມກ່ຽວກັບການຂ້າເຊື້ອແລະຄຳແນະນຳກ່ຽວກັບຄວາມປອດໄພຂອງສະຖານທີ່ໂດຍສະເພາະກັບເຈົ້າໜ້າທີ່ເລືອກຕັ້ງທີ່ໄດ້ຮັບມອບໝາຍຂອງພວກເຂົາ. ເຈົ້າໜ້າທີ່ເລືອກຕັ້ງຈະເຊັນຊື່ໃສ່ແບບຟອມເບີກຈ່າຍເງິນເດືອນເພື່ອຮັບຮອງວ່າພວກເຂົາໄດ້ຮັບການຝຶກອົບລົມແລ້ວ.

*C.* **ຜູ້ອຳນວຍການການຂົນສົ່ງ.**

ເຈົ້າໜ້າທີ່ຊ່ວຍເຫຼືອເພີ່ມເຕີມຈະໄປປະຕິບັດງານທີ່ສູນເລືອກຕັ້ງທຸກແຫ່ງ. ເຈົ້າໜ້າທີ່ຊ່ວຍເຫຼືອເຫຼົ່ານີ້ຈະປະຈຳຢູ່ພາຍນອກສູນເລືອກຕັ້ງພ້ອມຖົງສີບົວໃສ່ບັດເລືອກຕັ້ງເພື່ອຮັບເອົາບັດເລືອກຕັ້ງຈາກຜູ້ມີສິດລົງຄະແນນສຽງທີ່ມາພຽງເພື່ອຈະປ່ອນບັດເລືອກຕັ້ງຂອງພວກເຂົາ. ນອກຈາກນັ້ນເຈົ້າໜ້າທີ່ຊ່ວຍເຫຼືອເຫຼົ່ານີ້ຈະກວດກາຈຳນວນຄົນທີ່ຢູ່ພາຍໃນບໍລິເວນເລືອກຕັ້ງໃນເວລາດຽວກັນໂດຍໃຊ້ອຸປະກອນວິທະຍຸສື່ສານຕາມຄວາມຈຳເປັນແລະແຈກໜ້າກາກແລະແຜ່ນປ້ອງກັນໜ້າໃຫ້ຜູ້ທີ່ຍັງບໍ່ມີ ເຈົ້າໜ້າທີ່ຊ່ວຍເຫຼືອເຫຼົ່ານີ້ໃນໃສ່ສາຍຫ້ອຍຄໍສີບົວພ້ອມກັບປ້າຍພັດສະຕິກທີ່ລະບຸວ່າພວກເຂົາເຈົ້າເປັນເຈົ້າໜ້າທີ່ເລືອກຕັ້ງ ເຈົ້າໜ້າທີ່ຊ່ວຍເຫຼືອຈະສືບຕໍ່ເຂົ້າຮັບການຝຶກອົບລົມກ່ຽວກັບການກວດສອບລາຍເຊັນເທິງຊອງຈົດໝາຍສຳລັບສົ່ງກັບຄືນແລະຈະມີແທ່ງກາວໃຫ້ສຳລັບຜູ້ມີສິດລົງຄະແນນສຽງນຳໃຊ້. ຈະມີຖົງມືແລະນ້ຳຢາທຳຄວາມສະອາດມືໃຫ້ສຳລັບທຸກຄົນ ແລະເຈົ້າໜ້າທີ່ຊ່ວຍເຫຼືອຈະຕ້ອງໃສ່ຖົງມືເມື່ອຈັບບັດເລືອກຕັ້ງຫຼືແລກປ່ຽນເອກະສານຂໍ້ມູນ.

*D.* **ສະຖານະການທີ່ຫຍຸ້ງຍາກ.**

ການເລືອກຕັ້ງທົ່ວໄປເພື່ອເລືອກປະທານາທິບໍດີແມ່ນມີຄວາມທ້າທາຍແລະຮ້ອນແຮງຕະຫຼອດ. ໃນລະຫວ່າງການແຜ່ລະບາດນີ້ເຮັດໃຫ້ມີບັນຫາເພີ່ມເຕີມ ແລະມີການໂຕ້ຖຽງກ່ຽວກັບການໃຊ້ໜ້າກາກ, ຄວາມປອດໄພໃນການເລືອກຕັ້ງ ແລະສາມາດຄາດໝາຍໄດ້ວ່າຄິວຈະຍາວ ນອກຈາກການສົ່ງຂໍ້ຄວາມໃຫ້ຜູ້ມີສິດລົງຄະແນນສຽງແລະການຕັ້ງຄວາມຄາດໝາຍວ່າຄິວຈະຍາວໃນວັນເລືອກຕັ້ງແລ້ວ ພວກເຮົາຍັງກຳລັງເຮັດວຽກເພື່ອໃຫ້ຄຳແນະນຳແກ່ເຈົ້າໜ້າທີ່ເລືອກຕັ້ງຂອງພວກເຮົາກ່ຽວກັບການຮັກສາຄວາມປອດໄພແລະການລົດຄວາມຮຸນແຮງຂອງສະຖານະການໃດໆ. ຄາວຕີ້ຊາຄຼາເມັນໂຕຈະລວມເອົາຄຳແນະນຳຂອງເລຂາທິການຂອງລັດເຂົ້າໃນຂັ້ນຕອນຕ່າງໆທີ່ຢູ່ໃນປຶ້ມຄູ່ມືສູນເລືອກຕັ້ງກ່ຽວກັບວິທີການການລົດຄວາມຮຸນແຮງຂອງສະຖານະການ (**ເອກະສານຄັດຕິດ *G***).

ນອກຈາກນັ້ນສຳນັກງານຕຳຫຼວດຂອງຄາວຕີ້ແລະພະແນກຕຳຣວຈຂອງເມືອງຈະໄດ້ຮັບຂໍ້ມູນທີ່ຕັ້ງສູນເລືອກຕັ້ງທຸກແຫ່ງ ເຜື່ອມີເຫດດັ່ງກ່າວເກີດຂຶ້ນ. ຈະມີການສົ່ງຕຳຫຼວດຫຼືສາລະວັດໄປທີ່ເກີດເຫດຖ້າມີການຂົ່ມຂູ່ຫຼືການໂຕ້ຖຽງກັນທີ່ເຈົ້າໜ້າທີ່ເລືອກຕັ້ງບໍ່ສາມາດຈັດການໄດ້.

## II. ຕູ້ປ່ອນບັດເລືອກຕັ້ງ ແລະການລວບລວມບັດເລືອກຕັ້ງ.

ຄາວຕີ້ຊາຄຣາເມັນໂຕໄດ້ຕິດຕໍ່ຫາຮ້ານຂາຍເຄື່ອງຫຼາຍປະເພດແລະເຄືອຂ່າຍຮ້ານຄ້າຍ່ອຍເພື່ອຈະເອົາຕູ້ປ່ອນບັດລົງຄະແນນໄປຕັ້ງພາຍໃນຄາວຕີ້. ຮ້ານ Raley's/Bel-Air ເຫັນດີນຳທີ່ຈະໃຫ້ເອົາຕູ້ປ່ອນບັດເລືອກຕັ້ງຢ່າງເປັນທາງການໄປຕັ້ງແລະທາງ VRE ຈະນຳໃຊ້ຮ້ານນີ້ທຸກສະຖານທີ່ໃນຄາວຕີ້ຊາຄາເມັນໂຕ. VRE ຈະສືບຕໍ່ເພື່ອເຮັດວຽກກັບຫ້ອງສະມຸດປະຊາຊົນຊາຄາເມັນໂຕເພື່ອເອົາຕູ້ປ່ອນບັດເລືອກຕັ້ງໄປຕັ້ງແລະຫ້ອງການຂອງເມືອງເຮົາ. ເປົ້າໝາຍຂອງເຮົາແມ່ນມີຕູ້ປ່ອນບັດເລືອກຕັ້ງເປີດຮັບບັດເລືອກຕັ້ງຢູ່ 58 ບ່ອນເລີ່ມເປີດໃນວັນອາທິດທີ 5 ຕຸລານີ້. ຈະມີຕູ້ປ່ອນບັດເລືອກຕັ້ງເປີດຮັບບັດເລືອກຕັ້ງ 24 ຊົ່ວໂມງຕັ້ງຢູ່ພາຍນອກທີ່ຫ້ອງການ VRE ແລະທີ່ສາລາກາງເມືອງທີ່ Citrus Heights.

ຈະມີການປະກາດເຜີຍແຜ່ທີ່ຕັ້ງທີ່ໄດ້ຮັບການຢືນຢັນໃນເວັບໄຊຂອງ VRE ກາງເດືອນກັນຍາ ແລະຈະຖືກລວມເຂົ້າໃນປຶ້ມຄູ່ມືຂໍ້ມູນສຳລັບຜູ້ມີສິດລົງຄະແນນສຽງຂອງຄາວຕີ້ ແລະຊຸດເອກະສານສຳລັບຜູ້ມີສິດລົງຄະແນນສຽງທາງຈົດໝາຍ.

ໃນຂະນະທີ່ມີການໂຕ້ຖຽງກັນກ່ຽວກັບບໍລິການໄປສະນີສະຫະລັດນັ້ນ VRE ສືບຕໍ່ພົວພັນກັບຜູ້ຕ່າງໜ້າໄປສະນີທ້ອງຖິ່ນຂອງພວກເຮົາ. ຢ່າງໃດກໍ່ຕາມຄວາມກັງວົນກໍ່ໄດ້ເກີດຂຶ້ນໃນທົ່ວປະເທດແລ້ວກ່ຽວກັບສະຖານະການນີ້ໃນຂະນະທີ່ເດືອນພະຈິກໃກ້ຈະມາເຖິງ. VRE ກຳລັງກະກຽມເພື່ອຮັບມືກັບຈຳນວນບັດເລືອກຕັ້ງທີ່ຈະຖືກປ່ອນເພີ່ມຂຶ້ນໂດຍການແຈກກ່ອງປ່ອນບັດເລືອກຕັ້ງເພີ່ມເຕີມໃຫ້ທຸກສະຖານທີ່ເລືອກຕັ້ງທັງໝົດຂອງເຮົາອີກ. ບັນດາທີມງານຈະສ້າງຕັ້ງປະຕິບັດເພື່ອກວດກາກ່ອງປ່ອນບັດເລືອກຕັ້ງແລະການໄປຮັບບັດເລືອກຕັ້ງຢ່າງເປັນປົກກະຕິຕາມມາດຕະຖານການການໄປຮັບບັດເລືອກຕັ້ງແບບສຸກເສີນ [Emergency Ballot Pick-up standards].

ພວກເຮົາເຊີນບັນດາພັນທະມິດໃນຊຸມຊົນເພື່ອຊ່ວຍເຫຼືອ VRE ໃນການເກັບລວບລວມບັດເລືອກຕັ້ງ, ໂດຍສະເພາະຖ້າມີຄວາມຈຳເປັນເພີ່ມຂຶ້ນ ແລະ VRE ບໍ່ສາມາດຮັບມືກັບປະລິມານທີ່ເພີ່ມຂຶ້ນໄດ້. ພັນທະມິດໃນຊຸມຊົນຈະໄດ້ຮັບມອບໝາຍອຳນາດໃຫ້ຮັບບັດເລືອກຕັ້ງແທນ VRE, ເຊັ່ນດຽວກັບຕູ້ປ່ອນບັດເລືອກຕັ້ງທີ່ໄດ້ຮັບມອບໝາຍອຳນາດ. ຈະນຳໃຊ້ຮູບແບບແລະຂັ້ນຕອນລະບົບຕ່ອງໂສ້ການດູແລບັດເລືອກຕັ້ງກັບອາສາສະໝັກຂອງຊຸມຊົນເພື່ອຊ່ວຍໃນສະຖານະການການເລືອກຕັ້ງໃດໆ. ການອະນຸມັດການລວບລວມບັດເລືອກຕັ້ງແມ່ນຂຶ້ນຢູ່ກັບການຕັດສິນໃຈຂອງນາຍທະບຽນຂອງຜູ້ມີສິດລົງຄະແນນສຽງ ແລະຈະຕ້ອງປະຕິບັດຕາມກົດໝາຍແລະຂັ້ນຕອນຂອງເຮົາ.

## III. ການລົງທະບຽນເພື່ອເລືອກຕັ້ງແລະຫ້ອງການເລືອກຕັ້ງ

### A. ແຜນການຈັດຕັ້ງຫ້ອງການ ແລະແຜນການຂ້າເຊື້ອໂລກທົ່ວໄປ.

ຕະຫຼອດເດືອນເມສາແລະເດືອນພຶດສະພາ ທາງ VRE ໄດ້ເຮັດວຽກເພື່ອສ້າງສະພາບແວດລ້ອມການເຮັດວຽກທີ່ປອດໄພທີ່ເລກທີ່ 7000 65th Street. ການຈັດຕັ້ງນີ້ປະກອບມີ:

- ແຜ່ນພັດສະຕິກປ້ອງກັນທີ່ເຄືອນຍ້າຍໄດ້ທີ່ບ່ອນຄາວເຕີທາງໜ້າໃນຂະນະທີ່ລໍຖ້າການຕິດຕັ້ງແຜ່ນກະຈົກປ້ອງກັນຖາວອນ
- ແຜ່ນພັດສະຕິກປ້ອງກັນລະຫວ່າງບ່ອນເຮັດວຽກມີແນວກັ້ນ, ລວມທັງແຜ່ນປ້ອງກັນປັບຂະໜາດຕາມຄວາມຕ້ອງການສຳລັບສູນໂທລະສັບ

- ເຄື່ອງໝາຍຂີດຕາມພື້ນບໍລິເວນທີ່ລູກຄ້າຄວນຈະຢືນເພື່ອໃຫ້ແນ່ໃຈວ່າມີການນໍາໃຊ້ໄລຍະຫ່າງທາງສັງຄົມ
- ທາງເຂົ້າແລະທາອອກທີ່ໄດ້ຮັບການກໍານົດ
- ແນວກັ້ນທາງເດີນເພື່ອຊ່ວຍຊີ້ນໍາການເຂົ້າຄິວຂອງລູກຄ້າ
- ໜ້າກາກທີ່ຈໍາເປັນຕ້ອງໃສ່ທີ່ແມ່ນນະໂຍບາຍສໍາລັບພະນັກງານ. ມີຂໍ້ຍົກເວັ້ນແມ່ນສໍາລັບພະນັກງານທີ່ເຮັດວຽກຢູ່ທີ່ໂຕະເທົ່ານັ້ນ ແລະຢູ່ຫ່າງຈາກຄົນອື່ນຫຼາຍກວ່າ 6 ຟຸດ. ພະນັກງານຈະໄດ້ຮັບການຊຸກຍູ້ໃຫ້ຢຸດເຊົາໄປພັກທຸກໆໜຶ່ງຊົ່ວໂມງເພື່ອຮັບເອົາອາກາດບໍລິສຸດ.
- ປ້າຍລະບຸຈໍານວນຄົນໃຊ້ບໍລິການສູງສຸດໃນແຕ່ລະຫ້ອງ/ພື້ນທີ່ (1 ຄົນຕໍ່ທຸກ 100 ຕາລາງຟຸດ)
- ປ້າຍລະບຸວ່າມີໜ້າກາກສໍາລັບລູກຄ້າ ແລະຈະສືບຕໍ່ແຈກໜ້າກາກໃຫ້ລູກຄ້າທີ່ບໍ່ມີໜ້າກາກ.
    1. ສໍາລັບລູກຄ້າທີ່ບໍ່ມີໜ້າກາກ ເຂົາເຈົ້າຕ້ອງຢູ່ດ້ານຫຼັງແຜ່ນພັດສະຕິກປ້ອງກັນ ຢູ່ຫ່າງອອກໄປ 6 ຟຸດ ຫຼືໃສ່ແຜ່ນປ້ອງກັນໜ້າ
- ໂປສເຕີ CDC COVID
- ນໍາໃຊ້ລະບົບບັດຄິວທີ່ມີໃຫ້ຢູ່ລອບນີ້
- ສະຖານີນໍ້າຢາລ້າງມືທີ່ມີຢູ່ທົ່ວຫ້ອງການ
- ແຜນການຂ້າເຊື້ອ (**ເອກະສານຄັດຕິດ H**)
    1. ເອກະສານຂໍ້ມູນຄວາມປອດໄພສານເຄມີ ຫຼື MSDS ແມ່ນຈໍາເປັນພາຍໃຕ້ມາດຕະຖານການສື່ສານກ່ຽວກັບວັດຖຸອັນຕະລາຍຂອງໂອຊາສະຫະລັດອາເມລິກາ (US OSHA Hazard Communication Standard) ແລະສານເຄມີໃໝ່ທັງໝົດທີ່ຖືກນໍາເຂົ້າມາໃນພະແນກຈະໄດ້ຮັບການປະເມີນແລະບັນທຶກໃສ່ໃນ MSDS.

ນອກຈາກນັ້ນພະນັກງານຈະໄດ້ຮັບການຊຸກຍູ້ໃຫ້ຢູ່ເຮືອນຖ້າພວກເຂົາຮູ້ສຶກບໍ່ສະບາຍ. ຂັ້ນຕອນການກວດກາອຸນຫະພູມກໍາລັງໄດ້ຮັບການປະເມີນຢູ່ໃນຂະນະນີ້. ນາຍທະບຽນຂອງຜູ້ມີສິດລົງຄະແນນສຽງກໍາລັງເຮັດວຽກກັບຜູ້ອໍານວຍການຫ້ອງການສາທາລະນະສຸກຂອງຄາວຕີ້ຊາຄຳເມັນໂຕຢ່າງຈິງຈັງສໍາລັບກິດຈະກໍາທຸກຢ່າງທີ່ກ່ຽວຂ້ອງກັບການເລືອກຕັ້ງ.

**B.** **ການນັບບັດເລືອກຕັ້ງ**. ບັດນີ້ສາມາດເລີ່ມຕົ້ນນັບບັດເລືອກຕັ້ງໄດ້ 29 ວັນກ່ອນວັນເລືອກຕັ້ງ, VRE ຈະປະເມີນປະລິມານການໄດ້ຮັບບັດເລືອກຕັ້ງເພື່ອກໍານົດເວລາທີ່ເໝາະສົມໃນການເລີ່ມຕົ້ນນັບບັດເລືອກຕັ້ງທີ່ໄດ້ຮັບຄືນມາ. **ເອກະສານຄັດຕິດ I** ສະແດງໃຫ້ເຫັນແຜນຜັງສໍາລັບການນັບດໍາເນີນການຕໍ່ໄປຢ່າງປອດໄພ. ຈະມີການກວດກາຈໍານວນຄົນໃຊ້ບໍລິການສູງສຸດແລະບັງຄັບໃຊ້ກົດຕະຫຼອດເວລາ, ລວມເຖິງຫ້ອງນັບບັດເລືອກຕັ້ງ. ກໍາລັງມີການກວດກາຄືນກ່ຽວກັບທາງເລືອກໃນການກວດກາການຖ່າຍທອດສົດແລະສະເໝືອນຈິງຂອງກິດຈະກໍາການເລືອກຕັ້ງ. ຈະມີແຜ່ນພັດສະຕິກປ້ອງກັນທີ່ຍົກຍ້າຍໄດ້ໃຫ້ ພ້ອມກັບ PPE ສໍາລັບລູກຄ້າແລະພະນັກງານທຸກຄົນ. ກິດຈະກໍາການຫາສຽງກໍາລັງຢູ່ພາຍໃຕ້ການພິຈາລະນາ.

C. **ຜູ້ສັງເກດການ/ສື່ມວນຊົນ.** ທີ່ສູນເລືອກຕັ້ງທັງໝົດ, ຜູ້ສັງເກດການແລະສື່ມວນຊົນຕ້ອງໃສ່ໜ້າກາກຕະຫຼອດເວລາ. ທີ່ VRE ຜູ້ສັງເກດການທີ່ວາງແຜນຈະຢູ່ບໍລິເວນໃດເກີນກວ່າ 15 ນາທີຕ້ອງໃສ່ໜ້າກາກ**ແລະ**ແຜ່ນປ້ອງກັນໜ້າ. ຈະມີການບັງຄັບໃຊ້ການຮັກສາໄລຍະຫ່າງທາງສັງຄົມ. ປະຈຸບັນ VRE ກໍາລັງປະເມີນວິທີຕ່າງໆເພື່ອໃຫ້ແນ່ໃຈວ່າມີການຮັກສາໄລຍະຫ່າງທາງສັງຄົມໃນຂະນະທີ່ຍັງຮັກສາຄວາມໂປ່ງໃສໄດ້ ເຊັ່ນການທ່ອງທ່ຽວມະເໝືອນຈິງ, ການຖ່າຍທອດສົດການນັບແລະການລວບລວມບັດເລືອກຕັ້ງທີ່ສົ່ງຄືນມາໃນຄືນວັນເລືອກຕັ້ງ ແລະຂັ້ນຕອນການສາຍຮູບເງົາຂັ້ນຕອນເທິງຝາຫຼືທາງໜ້າຈໍໃຫຍ່ ນອກຈາກນັ້ນຜູ້ສັງເກດການແລະສື່ມວນຊົນຈະຕ້ອງມາຕາມນັດໝາຍທີ່ເຮັດລ່ວງໜ້າ, ບໍ່ອະນຸຍາດໃຫ້ເຂົ້າມາໂດຍບໍ່ໄດ້ນັດໝາຍ. ຈະມີການກໍານົດບໍລິເວນຕະຫຼອດທົ່ວຫ້ອງການບ່ອນທີ່ຜູ້ສັງເກດການ/ສື່ມວນຊົນຈະຖືກຂໍຮ້ອງໃຫ້ຢືນ.

IV. **ການເຜີຍແຜ່ຂໍ້ມູນແລະການສົ່ງຂໍ້ຄວາມ**

A. **ການເລືອກຕັ້ງທາງໄປສະນີ**: **ຊຸດເອກະສານເລືອກຕັ້ງທາງໄປສະນີຈະລວມມີ:**

- ບັດເລືອກຕັ້ງຢ່າງເປັນທາງການຂອງຜູ້ມີສິດລົງຄະແນນສຽງ
- ຊອງຈົດໝາຍສົ່ງຄືນສີບົວ
- ໃບແຊກສະຕິກເກີ "ຂ້ອຍເລືອກຕັ້ງແລ້ວ"
- ໃບແຊກເລືອກຕັ້ງຢ່າງປອດໄພ (ໃໝ່) **ເອກະສານຄັດຕິດ J**

ຈະສະໜັບສະໜູນໃຫ້ຜູ້ມີສິດລົງຄະແນນສຽງສົ່ງບັດເລືອກຕັ້ງຄືນລ່ວງໜ້າທາງໄປສະນີ ຫຼືໂດຍການບ່ອນບັດທີ່ຕູ້ບ່ອນບັດເລືອກຕັ້ງກໍ່ໄດ້. ທາງ VRE ຈະສືບຕໍ່ກວດກາສະຖານະການກັບຫ້ອງການບໍລິການໄປສະນີສະຫະລັດອາເມລິກາ. ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງກ່ຽວກັບລົງຄະແນນສຽງທາງໄປສະນີ ແລະການກວດສອບແລະການດຸ່ມດ່ຽງອໍານາດທີ່ມີຢູ່ໃນການລົງຄະແນນສຽງທາງໄປສະນີຈະສືບຕໍ່ເປັນຫົວຂໍ້ສົນທະນາດ້ວຍຄວາມພະຍາຍາມທີ່ທາງ VRE ຈະ ເຜີຍແຜ່ຄວາມຮູ້ໃຫ້ກັບປະຊາຊົນ.

B. **ການລົງຄະແນນສຽງທາງໄປສະນີທີ່ສາມາດເຂົ້າເຖິງໄດ້ (AVBM).** ທາງເລືອກນີ້ຈະມີໃຫ້ສໍາລັບຜູ້ມີສິດລົງຄະແນນສຽງທຸກຄົນ ເລີ່ມຕົ້ນ 29 ວັນກ່ອນວັນເລືອກຕັ້ງ. ຈະບໍ່ມີການລົນນະລົງຢ່າງແຂງຂັນຫຼືການເຜີຍແຜ່ຄວາມຮູ້ກັບປະຊາຊົນກ່ຽວກັບເລື່ອງນີ້ ແຕ່ພະນັກງານຈະໃຫ້ທາງເລືອກນີ້ກັບຜູ້ມີສິດລົງຄະແນນສຽງທາງໂທລະສັບຫຼືທາງອີເມວ ເຖິງແມ້ວ່າພວກເຂົາເຈົ້າຈະບໍ່ແມ່ນທະຫານ/ຢູ່ຕ່າງປະເທດ ຫຼືມີຄວາມພິການ. VRE ວາງແຜນທີ່ຈະນໍາໃຊ້ທາງເລືອກນີ້ໃນຂະນະທີ່ການເລືອກຕັ້ງໃກ້ເຂົ້າມາແລ້ວ, ຫຼັງຈາກວັນທີ 27 ຕຸລາເມື່ອມັນຊ້າເກີນໄປທີ່ຈະສົ່ງບັດເລືອກຕັ້ງທາງໄປສະນີໃຫ້ຜູ້ມີສິດລົງຄະແນນສຽງ. ສະຖານະການຂອງໄປສະນີສະຫະລັດອາເມລິກາອາດຈະປ່ຽນແປງຂໍ້ຄວາມກ່ຽວກັບເລື່ອງນີ້.

ມີການເພີ່ມເຕີມຖ້ອຍຄໍາໃນລະບົບ AVBM ທີ່ຜູ້ມີສິດລົງຄະແນນສຽງສາມາດເລືອກເອົາໂຄວິດ-19 ເປັນຕົວເລືອກກ່ຽວກັບເຫດຜົນທີ່ພວກເຂົານໍາໃຊ້ລະບົບດັ່ງກ່າວ. ກະລຸນາເບິ່ງທີ່ເວັບໄຊ demo site ສໍາລັບຖ້ອຍຄໍາທີ່ແນ່ນອນ.

C. **ລະບຽບຂັ້ນຕອນຂອງສູນເລືອກຕັ້ງ.** ຈະມີການສົ່ງແຈ້ງການຕ່າງໆທາງໄປສະນີໃຫ້ກັບຜູ້ມີສິດລົງຄະແນນສຽງທຸກຄົນ ແລະລົງແຈ້ງການໃນເວັບໄຊຂອງ VRE

ເພື່ອແຈ້ງການໃຫ້ຜູ້ມີສິດລົງຄະແນນສຽງຊາບກ່ຽວກັບຄວາມຄາດໝາຍໃນການລົງຄະແນນສຽງດ້ວຍຕົນເອງ. ຜູ້ມີສິດລົງຄະແນນສຽງຈະໄດ້ຮັບການຊຸກຍູ້ໃຫ້:

- ໃສ່ອຸປະກອນປົດໜ້າທີ່ສະອາດ
- ເອົາເກີບທີ່ໃສ່ສະບາຍສໍາລັບໃສ່ຂະນະລໍຖ້າ
- ເອົາປຶ້ມຄູ່ມືຂໍ້ມູນສໍາລັບຜູ້ມີສິດລົງຄະແນນສຽງຂອງຄາວຕີ້ເພື່ອຊ່ວຍໃນການສື່ສານໃນເວລາເຊັກອິນແລະກາໝາຍບັດເລືອກຕັ້ງຕົວຢ່າງເພື່ອຈໍາກັດເວລາທີ່ຈະໃຊ້ໃນບໍລິເວນເລືອກຕັ້ງ
- ແຈ້ງໃຫ້ພະນັກງານສູນເລືອກຕັ້ງຊາບຖ້າທ່ານມີຄວາມພິການແລະຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມ

ທາງ VRE ກໍາລັງເຮັດວຽກກັບທີມບານບ່ວງຊາຄຣາເມັນໂຕຄີງແລະພັນທະມິດຊຸມຊົນອື່ນໆເພື່ອເນັ້ນໜັກເຖິງຄວາມສໍາຄັນໃນການລົງຄະແນນສຽງລ່ວງໜ້າແລະການຫຼີກລ້ຽງການລໍຄິວໃນວັນເລືອກຕັ້ງ. ຄາດວ່າຈະມີຄິວຍາວເພາະວ່າມີການໃຊ້ໄລຍະຫ່າງທາງສັງຄົມທີ່ກໍານົດແລະການຈໍາກັດຈໍານວນຜູ້ມີສິດລົງຄະແນນສຽງໃນບໍລິເວນເລືອກຕັ້ງ.

## D. **ຄວາມພະຍາຍາມໃນການເຜີຍແຜ່ຄວາມຮູ້ໃຫ້ກັບປະຊາຊົນ**.

ໃນຂະນະທີ່ຫຼາຍເຫດການຕ້ອງຖືກຍົກເລີກຍ້ອນສະຖານະການໂຄວິດ -19 ເຊັ່ນວ່າການທົດລອງເລືອກຕັ້ງໃນໂຮງຮຽນ ມັດທະຍົມຕອນປາຍຂອງພວກເຮົາ, ທາງທີມເຜີຍແຜ່ຄວາມຮູ້ໃຫ້ກັບປະຊາຊົນຂອງ VRE ຍັງສືບຕໍ່ຊອກຫາວິທີທີ່ສ້າງສັນໃນການກະຈາຍຂໍ້ຄວາມກ່ຽວກັບການເລືອກຕັ້ງໄປທົ່ວຊຸມຊົນ. ຄວາມພະຍາຍາມຕ່າງໆລວມເຖິງ:

- ການແຈກຢາຍເອກະສານໃຫ້ກັບຮ້ານຂາຍເຄື່ອງຍ່ອຍ ລວມເຖິງຮ້ານຂາຍເຄື່ອງໃຫ້ຄົນກຸ່ມຊົນເຜົ່າໃນພື້ນທີ່ທີ່ການເລືອກຕັ້ງຕໍ່າຕາມປະວັດທີ່ພວກເຮົາມີ
- ການແຈກຢາຍເອກະສານໃຫ້ກັບສະຖານທີ່ແຈກຢາຍອາຫານ ແລະສະຖານທີ່ທົດສອບໂລກໂຄວິດ
- ການແຈກຢາຍເອກະສານໃຫ້ກັບໂຮງຮຽນ
- ການແຈກຢາຍເອກະສານໃຫ້ກັບອົງກອນຕ່າງໆ ທີ່ຍັງໃຫ້ບໍລິການກັບລູກຄ້າ
- ການຊອກຫາງານອີເວັນຊຸມຊົນສະເໝືອນຈິງບ່ອນທີ່ພວກເຮົາສາມາດເວົ້າກ່ຽວກັບການເລືອກຕັ້ງທີ່ຈະມາເຖິງ ແມ່ນວ່າຈະມີເວລາສອງນາທີກໍ່ຕາມ
- ການສະເໜີຂ່າວສານເລື່ອງລາວສໍາລັບໜັງສືພິມທ້ອງຖິ່ນແລະຈົດໝາຍຂ່າວອອນລາຍ
- ການປະຊຸມຜ່ານເວັບແລະການແຈກຢາຍເອກະສານໃຫ້ກັບຄຸກ, ໂຮງໝໍ, ສະຖານບໍລິການດູແລ ແລະສະຖານບໍລິການລູກຄ້າທີ່ຕ້ອງການການຊ່ວຍເຫຼືອດູແລ
- ການປະສານງານການເຜີຍແຜ່ຮ່ວມກັນຂອງຄາວຕີ້ລະຫວ່າງບັນດາສື່ມວນຊົນຮ່ວມຂອງເຮົາກັບຄາວຕີ້ເອລໂດຣາໂດ, ເນວາດາ, ເພລເຊີ, ຊານໂຮຄິນ, ສະຕານິເລາ, ຊັດເຕີ, ໂຢໂລ ແລະຢູບາ. ກໍາລັງມີການວາງແຜນເຜີຍແຜ່ຂໍ້ຄວາມທາງວິທະຍຸ 30 ວິນາທີ, ໂຄສະນາດິຈິຕອນ ແລະກິດຈະກໍາສະເໜີຂ່າວຂອງສື່ສໍາລັບເດືອນກັນຍາແລະເດືອນຕຸລາ. ກິດຈະກໍາ "ເລີ່ມຕົ້ນ" ຈະຖືກຈັດຂຶ້ນໃນວັນທີ 17 ກັນຍາທີ່ຫ້ອງການໄປສະນີເວສຊາຕຣາເມັນໂຕ. ລາຍລະອຽດຕ່າງໆຈະມີໃຫ້ໃນຕໍ່ໜ້າ.
- ຊາຕຣາເມັນໂຕຈະສືບຕໍ່ນໍາໃຊ້ພັນທະມິດສື່ມວນຊົນດຽວກັນທີ່ມີລາຍຊື່ຢູ່ໃນເອກະສານຊ້ອນທ້າຍ Appendix C ຂອງແຜນຈັດການບໍລິຫານການເລືອກຕັ້ງເດີມ, ພ້ອມດ້ວຍການຮ່ວມມືກັບສະພາການຄ້າສະລາວິກ (Slavic Chamber of

Commerce) ເພື່ອຊ່ວຍໃນການແຈກຢາຍເອກະສານສິ່ງພິມ, ການແລກປ່ຽນຂໍ້ມູນໃນສື່ສັງຄົມ ແລະການສ້າງພັນທະມິດກັບຊຸມຊົນແລະຜູ້ນຳທາງຄວາມເຊື່ອສັດທາ.

- ທີມບານບ້ວງຊາຄຣາເມັນໂຕຄິງ (Sacramento Kings) ຈະເຮັດໂຄສະນາກັບການຄົມມະນາຄົມສ່ວນພູມິພາກ (Regional Transit) ແລະສະເໜີໃຫ້ຂີ່ລົດໂດຍບໍ່ເສຍຄ່າໃນວັນເລືອກຕັ້ງ

**E. ເຄື່ອງມືແລະຂໍ້ມູນຕ່າງໆ:**

- Voter Registration & Elections November General ToolkitVoting by Mail in Sacramento County

# ເອກະສານຄັດຕິດ A – ຕົວຢ່າງປ້າຍ CVIG

**SACRAMENTO COUNTY**

**VOTER REGISTRATION AND ELECTIONS**

2020 Presidential Primary Election

County Voter Information Guide

If you want to view your County Voter Information Guide, you may see an electronic copy by visiting:
https://pollingplacelookupen.saccounty.net

Si desea consultar la Guía de Información para el Votante del Condado, puede obtener una copia electrónica visitando:
https://pollingplacelookupen.saccounty.net

如要查看《縣選民資訊指南》，可造訪以下網站上的電子副本：
https://pollingplacelookupen.saccounty.net



# ເອກະສານຄັດຕິດ B – ຕົວຢ່າງແຜນຜັງສູນເລືອກຕັ້ງ



# ເອກະສານຄັດຕິດ C – ຂັ້ນຕອນການຂ້າເຊື້ອສູນເລືອກຕັ້ງ

## COVID-19 Vote Center Disinfectant Assignments
## County of Sacramento

**Inspectors:** It is your responsibility to ensure disinfectant procedures are being carried out daily and throughout the voting period as needed. Please initial at the start of each day once assignments are complete.

Full disinfecting should begin at the beginning of each day, instead of the end, because the virus starts to degrade on hard surfaces almost immediately. For your protection, we ask you count the ballots (with gloves) and leave everything where it is to clean the following day. *Exception*: if the Election Officer will not be returning the next day, then the cleaning must be don't that evening prior to close.

PLEASE KEEP THIS IN THE VOTER CENTER GUIDE BINDER.

**Important:**

- Use of MG Chemical 70% Isopropyl Alcohol will be used for disinfecting all technology, materials, and surfaces. PLEASE spray the solution into the ULINE cloths to wipe, not directly on the equipment/surfaces. Gloves and a mask MUST be worn during disinfectant procedures.

- Gloves and masks must be word by Election Officers at all times. Breaks/lunches are encouraged to be outside so Election Officers can remove their masks and breathe fresh air. Encourage numerous breaks outside.

- All opening and closing assignments must be performed with masks and gloves. Once set-up/take down is complete, the gloves shall be disposed of immediately.

- All Election Officers are required to disinfect their assigned stations each morning, or disinfect their station each night before they leave if they will not be returning to that station.

- Assisting Officers are required to monitor voter behavior and disinfect ANY items the voter touches after use. AO's assignments MUST be done after every voter. In addition, any materials left over at booths, tables at the end of the day must be disposed of. Refer to your manual for abandoned ballot procedures, these are the same.

- If possible, doors mu regularly disinfected.

- The Ballot Bags mus return.

| Position | Assignment | Initial Start of Day |
|---|---|---|
| Check-in Officers | Check-in Laptops | ____ ____ ____ ____ |
| | DYMO Labelers | ____ ____ ____ ____ |
| | Mouse | ____ ____ ____ ____ |
| | USB Keys & Orange Bag | ____ ____ ____ ____ |
| | Desktop Printer | ____ ____ ____ ____ |
| | Applicable cords | ____ ____ ____ ____ |
| | File Organizer | ____ ____ ____ ____ |
| | Cradlepoint & cables (only if touched) | ____ ____ ____ ____ |
| | Tables & Chairs | ____ ____ ____ ____ |
| | Plastic Barriers | ____ ____ ____ ____ |
| Ballot Officers | ICX Activation Laptop & Card Reader | ____ ____ ____ ____ |
| | ICX Activation Cards | ____ ____ ____ ____ |

# ເອກະສານຄັດຕິດ D – ຕົວຢ່າງປ້າຍສູນເລືອກຕັ້ງ (ຍັງບໍ່ແນ່ນອນ)







**Attention Observers, Campaign Representatives, and Poll Watchers:**

Due to social distancing requirements, only a limited number of people will be allowed in the voting area at one time. Please respect and prioritize the needs of the voters before entering the voting area. You must identify yourself to the Vote Center staff upon entry to the voting area.

Masks are required inside the voting area at all times. You must maintain a distance of least 6 ft away from all voters and Vote Center staff.

Violators will be asked to leave the voting area immediately and will not be permitted back into the building.

Thank you for your respect and cooperation.

# ເອກະສານຄັດຕິດ E – ແຜນຜັງການອົບລົມເຈົ້າໜ້າທີ່ເລືອກຕັ້ງ



# ເອກະສານຄັດຕິດ F – ຕົວຢ່າງການອົບລົມກ່ຽວກັບໂຄວິດ



Voter Registration and Elections
Courtney Bailey-Kanelos
Registrar of Voters

County of Sacramento

Divisions
Campaign Services
Outreach
Precincts
Registration
Vote by Mail
Voting Systems & Technology

# COVID-19 Work Training

## Prevention

The recommendations below will assist in preventing the virus from spread

### Hand Hygiene

**Washing Methods**

- With soap and water for at least 20 seconds (hum the Happy Birthda
- Use hand sanitizer if soap and water are not available (with at least 70% isopropanol)
- Handwashing stations and/or hand sanitizing supplies are provided workplace. Please remember to use them frequently. To see specifi these stations and supplies, refer to your Worksite-Specific COVID-1 Plan.

**Washing Frequency**

- Before and after work shifts
- Before and after work breaks
- After blowing your nose, coughing, or sneezing
- After using the restroom
- Before eating or preparing food
- After putting on, touching, or removing cloth face coverings

**Centers for Disease Control and Prevention Website**

- Visit the CDC website for more information regarding hand hygiene
- https://www.cdc.gov/handwashing/when-how-handwashing.html

### Etiquette

**Coughing and Sneezing**

- Cover your cough or sn
- Throw use

**Sharing Items**

- Avoid sharing phones, mobile communication devices, desks, offices, or other work tools, supplies, and equipment, when possible
- If necessary, clean and disinfect shared items before and after use
- Never share Personal Protective Equipment (PPE) or face coverings
- Avoid sharing personal items with coworkers (e.g. dishes, cups, utensils, towels, etc.)

**Social Distancing**

- Avoid large gatherings
- Maintaining distance (six feet or more) from others when possible both at work and off work time
- Avoid close contact with people who are sick. Remember that some people without symptoms may be able to spread virus

**Greetings**

- Use non-contact forms of greetings.
  - Do not shake hands or other contact greetings.
  - Some non-contact greetings include nodding your head, pressing your hands together and nodding, lifting your hand in front of your eyes with your palm in, waving, verbal greetings, etc.

Regardless of what method of greeting you and your workplace choose to use, practice frequent handwashing and hand sanitizing

### Face Coverings

ect the wearer and are not Personal Protective

otect people near the wearer, but do not replace the need
frequent handwashing
es wear face coverings/masks (unless they have an
nose, mouth, and chin:
o enter, and indoor public space
member of the public
e visited by members of the public, regardless of
m the public is present at the time
ch as hallways, stairways, elevators, and parking

osed area where other people are present when unable to

ublic spaces when maintaining a physical distance of 6 ft.
feasible
l that face coverings/masks be worn when driving and
ers are present

## Precautions

It is important to avoid coming to work if you are experiencing any of the following:

- Fever or chills
- Cough
- Shortness of breath or difficulty breathing
- Fatigue
- Muscle or body aches
- Headache
- New loss of taste or smell
- Sore throat
- Congestion or runny nose
- Nausea or vomiting
- Diarrhea
- If you or someone you live with has been diagnosed with COVID-19

**Stay home when you are sick**

- Follow your absence reporting procedures
- Contact and follow the advice of your medical provider
- Employees with acute respiratory illness will be sent home

**Inform your supervisor if someone at home is sick with COVID-19**

**Symptom Checker Through Self-Screening**

Follow the CDC guidelines for self-screening and taking your temperature. Some common symptoms include:

- Fever or chills
- Cough
- Shortness of breath or difficulty breathing
- Fatigue
- Muscle or body aches
- Headache
- New loss of taste or smell
- Sore throat
- Congestion or runny nose
- Nausea or vomiting
- Diarrhea

*This list is not all possible symptoms

If you do have symptoms, contact and follow the advice of your medical provider. For severe symptoms including persistent pain or pressure in the chest, confusion, or bluish lips or face, seek emergency medical attention.

# ເອກະສານຄັດຕິດ G – ຄໍາແນະນໍາໃນການລົດຄວາມຂັດແຍ້ງ

## Election Officer De-escalation Tips
## County of Sacramento

Allow all voters with or without a face covering into the voting area, regardless of reason (refusal, medical reasons, etc). Let them know additional time is needed for safety protocols. **No voter shall be turned away if they are not wearing a mask.**

**Phrases:**

- "Your right to vote is going to be respected. Please give us time to organize the area to allow additional physical distance between you, our fellow election workers and other voters"
- "We are doing the best that we can, we ask for your patience"

**Key Elements:**

- Speak with a calm voice at a normal volume.
- Communicate with posture and expression that you are confident the voter will understand that their right to vote will be respected.
- Resist the urge to engage on the underlying objection or theories
- Repeatedly use words like "You're going to get to vote" or "We will get you to the voting booth as quickly as possible"
- Remember that serving the voter quickly, with less conflict, will best ensure your safety and that of other workers and voters.
- Have more than 1 worker present in any situation of conflict – one deescalating while the other evaluates the intensity of the situation
- Have a plan for calling in additional help from security or law enforcement
  - Code phrase to alert staff: "Is Jamie here?" when no one named Jamie is working
  - Save important numbers in personal phones

**When to escalate:** We will not tolerate any inappropriate behavior or harassment of election staff or voters. Voters that do not cooperate shall be asked to leave the voting area.

- Ask the voter to step outside and offer a ballot "to-go" where the voter can complete their ballot outside and deposit in the pink ballot bag.
- Call 911 for immediate emergency or contact local law enforcement
- Give the voter the direct line to our Registrar of Voters, Courtney Bailey-Kanelos: (916) 875-6060 for any complaints.

# ເອກະສານຄັດຕິດ H – ແຜນການຂ້າເຊື້ອຂອງ VRE

| **Cubicle/Office** | **Recommended Cleaning Schedule** | **Assigned to** |
| --- | --- | --- |
| Phone | Twice Daily | All Staff |
| Keyboard/Mouse | Twice Daily | All Staff |
| Desk Surface | Twice Daily | All Staff |
| Office Door Handles (if applicable) | Once Daily | All Staff |

| **Doors/Handles** | **Recommended Cleaning Schedule** | **Assigned to** |
| --- | --- | --- |
| Lobby Push Handles | Twice Daily | CS/VBM |
| Lobby to Shared Restrooms | Twice Daily | CS/VBM |
| Lobby to Office Area | Twice Daily | CS/VBM |
| South Warehouse Entry | Twice Daily | Warehouse |
| Training Room | Once Daily or more as needed | Last user |
| BOD Room (2 doors) | Once to Twice Daily depending on use | VBM |
| Quiet Room | Once Daily | CS |
| Petition Room | Once Daily | Registration |
| Ballot Counting Room | Once Daily, if entry | VST |
| Breakroom to Warehouse (if not propped) | Once Daily | Warehouse |
| Gated area to Small warehouse | As needed | Warehouse |
| Gated area to Large Warehouse | As needed | Warehouse |
| Man Door by North Roll Up | As needed | Warehouse |
| Admin Area to Small Warehouse | Once Daily or more as needed | Warehouse |
| Exit Door - Registration to South Parking Lot | Once to Twice Daily depending on use | Registration |
| Warehouse Exit Doors (Northwest and Southwest Corners) | As needed | Warehouse |
| Disclosure Room Handles | Once Daily or more as needed | CS |

| **Breakroom** | **Recommended Cleaning Schedule** | **Assigned to** |
| --- | --- | --- |
| Door - Breakroom to Patio | Twice Daily | Admin |
| Door - Ice room | Twice Daily | Admin |
| Breakroom Tables | Once Daily or more as needed | Admin |
| Kitchen Counter | Once Daily or more as needed | Admin |
| Refrigerator Handles | Twice Daily | Admin |
| Water Dispenser Controls | Twice Daily | Admin |
| Microwave Doors/Control Panel | Once Daily or more as needed | Admin |

| **Restrooms** | **Recommended Cleaning Schedule** | **Assigned to** |
| --- | --- | --- |
| Door Handles | Twice Daily | Facility Manager |
| Faucet Handles | Twice Daily | Facility Manager |
| Counter Tops | Twice Daily | Facility Manager |
| Flush Handles | Twice Daily | Facility Manager |
| Water Fountain Push Bars | Twice Daily | Facility Manager |
| Soap Dispenser | Twice Daily | Facility Manager |

| **General Office** | **Recommended Cleaning Schedule** | **Assigned to** |
| --- | --- | --- |
| Counter in Lobby | Once daily, as needed once open to public | CS/VBM |
| VBM Tables | Once before use then daily as needed | VBM/Registration |
| Computer Terminals @ Phone Bank | Once before use then daily as needed | Registration |
| Registration Coffee Bar (counter, soap dispenser and water faucet ha | Once before use then daily as needed | Registration |
| Mail Table - Campaigns | Once daily or more as needed | CS |
| Shared units (copy, fax, printers, scanners, projectors) | After use | By user, after use |
| Light Switches | Once daily, or more as needed | Last one to leave, by section |
| Vehicles | After use | Last user |
| Computer Terminals @ Lobby | Once daily, as needed once open to public | CS/VBM, after use |

# ເອກະສານຄັດຕິດ I – ແຜນຜັງຂັ້ນຕອນການນັບບັດເລືອກຕັ້ງ

